ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 08 ຫາ 12 ມັງກອນ 2024




## ປະກາດຮັບຮອງຈຸດສຸມພັດທະນາຜາສັງ ເມືອງເຟືອງ ເປັນຕົວເມືອງນ້ອຍໃນຊົນນະບົດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ປະກາດຮັບຮອງຈຸດສຸມພັດທະນາຜາສັງ ເປັນຕົວເມືອງນ້ອຍໃນຊົນນະບົດແຫ່ງທຳອິດຂອງ ແຂວງ ວຽງຈັນ

ພິທີປະກາດຮັບຮອງຈຸດສຸມພັດທະນາ ຜາສັງ ເມືອງ ເປັນຕົວນ້ອຍໃນຊົນນະບົດ ແຫ່ງທຳອິດຂອງ ແຂວງວຽງຈັນ ຈັດຂຶ້ນໃນຕອນເຊົ້າວັນທີ 5 ມັງກອນ 2024, ທີ່ບ້ານຜາສັງ ໂດຍມີທ່ານ ຄຳພັນ ສິດທິດຳພາ ເຈົ້າໆແຂວງວຽງຈັນ ພ້ອມດ້ວຍບັນດາເຈົ້າເມືອງ ພາຍໃນແຂວງ, ຕາງໜ້າຈາກກະຊວງກະສິກຳ ແລະ ປ່າໄມ້ ທ່ານ ບົວທົງ ຄຳຫາ ຫົວໜ້າກົມພັດທະນາຊົນນະບົດ, ແຂກຮັບເຊີນຈາກແຂວງໃຫ້ຄຽງ, ພະນັງງານ ແລະ ປະຊາຊົນ ພາຍໃນ ເຂດຈຸດສຸມດັ່ງກ່າວເຂົ້າຮ່ວມ.

ຈຸດສຸມພັດທະນາຜາສັງແມ່ນ ໜຶ່ງໃນສາມ ຈຸດສຸມ ພັດທະນາຂອງແຂວງວຽງຈັນ ມີທີ່ຕັ້ງຫ່າງຈາກເທດສະບານເມືອງເຟືອງ ໄປທາງທິດໃຕ້ ປະມານ 36 ກິໂລແມັດ ຕັ້ງຢູ່ລຽບເສັ້ນທາງ 4501 ຂອງແຂວງ ປະກອບມີ 10 ບ້ານ ຂຶ້ນກັບ, ມີ 156 ໜ່ວຍ ສາມັກຄີ ມີໜ່ວຍພັກຮາກຖານບ້ານທີ່ຂຶ້ນກັບຄະນະພັກຮາກຖານທັງໝົດ 10 ໜ່ວຍພັກ, ມີ 2415 ຄອບຄົວ ,ມີພົນລະເມືອງທັງໝົດ 104265 ຄົນ, ຍິງ 7049 ຄົນ, ປະກອບມີ 5 ຊົນເຜົ່າຄື: ເຜົ່າລາວ, ເຜົ່າໄຕ, ເຜົ່າກຶມມຸ, ເຜົ່າມົ້ງ ແລະ ເຜົ່າອິມ້ຽນ ທ່ານ ບຸນທົງ ອະໄພວົງ ກຳມະການພັກເມືອງ ຫົວໜ້າຈຸດສຸມພັດທະນາຜາສັງ ໄດ້ຂຶ້ນລາຍງານໃຫ້ຮູ້ ກ່ຽວກັບສະພາບການພັດທະນາຈຸດສົມຜາສັງ ເພື່ອກາຍເປັນຕົວເມືອງນ້ອຍໃນຊົນນະບົດ ແມ່ນເລີ່ມແຕ່ປີ 2018 ເປັນຕົ້ນມາ ຕາມ 16 ມາດຖານຕົວຊີ້ວັດ ຕາມດຳລັດຂອງລັດຖະບານສະບັບເລກທີ 348 ໂດຍຍົກໃຫ້ເຫັນທາແຮງ ຂໍ້ສະດວກ ສິ່ງທ້າທາຍ ແລະ ທິດທາງແຜນການພັດທະນາຈຸດສຸມແຫ່ງນີ້ໃນຕໍ່ໜ້າ ຊຶ່ງທ່າແຮງຕົ້ນຕໍ່ໃນການພັດທະນາຈຸດສຸມ ແມ່ນມີເສັ້ນທາງຂອງແຂວງເລກທີ 4501 ຜ່ານໃຈກາງເປັນເຂດຊຸມຊົນໜາແໜ້ນ ເໝາະສົມກັບການຄ້າຂາຍ ແລະ ເຮັດບໍລິການ ປະຊາຊົນມີມູນເຊື້ອດຸໝັ່ນ ແລະ ຊົນເຄີຍໃນການຜະລິດ ມີເນື້ອທີກວ້າງຂວາງຮາບພຽງ ເໝາະສົມກັບການປູກຝັງ ລ້ຽງສັດ ແລະ ພືດ




ອຸດສາຫະກຳອື່ນໆ ມີເນື້ອທີ່ທັງໝົດ 34.887,3 ເຮັກຕາ ໃນນັ້ນເນື້ອທີປູກເຂົ້ານາປີ 982 ເຮັກຕາ, ສະເລ່ຍສະມັດຕະພາບການຜະລິດເຂົ້າ 4 ໂຕນເຄິ່ງຕໍ່ເຮັກຕາ, ຜົນຜະລິດໄດ້ທັງໝົດ 8.919ໂຕນ, ເນື້ອທີນາແຊງມີ 38 ເຮັກຕາ ສະມັດຕະພາບໄດ້ໂຕນຕໍ່ເຮັກຕາ, ຜົນຜະລິດໄດ້ 152 ໂຕນ, ເນື້ອທີ່ໄຮໝູນວຽນມີ 1.266 ເຮັກຕາ, ສະມັດຕະພາບ 3,8 ໂຕນຕໍ່ເຮັກຕາ ຜົນຜະລິດໄດ້ 4.810,8 ໂຕນ, ລວມຜົນຜະລິດທັງໝົດ 13.729,8ໂຕນ ສະເລ່ຍໃສ່ຫົວຄົນ 962 ກິໂລຕໍ່ຄົນຕໍ່ປີ,ຄິດເປັນຄົນ 122 ຕື້ກວ່າກີບ ໄດ້ປະກາດເປັນບ້ານພັດທະນາ ຄັ້ງວັນທີ 16 ພະຈິກ 2023, ປະກາດຮັບຮອງເປັນໜ່ວຍພັກປອດໃສເຂັ້ມແຂງ ແລະ ໜັກແໜ້ນ ໃນຄັ້ງວັນທີ 7 ມີນາ 2022 ໄດ້ປະກາດເປັນບ້ານແບບຢ່າງສາທາລະນະສຸກ ໃນວັນທີ 12 ເມສາ 2010, ປະກາດເປັນບ້ານແມ່ຍິງ 3 ດີ ຄັ້ງວັນທີ 7 ທັນວາ 2018 ບ້ານຢຸດຕິການຖາງປ່າເຮັດໄຮ່ ແບບເລື່ອນລອຍ ໃນວັນທີ 14 ມີນາ 2014 ບ້ານປອດຢາເສບຕິດ ໃນຄັ້ງວັນທີ 11 ມັງກອນ 2016, ບ້ານວັດທະນາທຳໃນຄັ້ງວັນທີ 16 ສິງຫາ 2016, ບ້ານປ້ອງກັນຄວາມສະຫງົບດີວັນທີ 19 ທັນວາ 2016, ບ້ານປ້ອງກັນຊາດເຂັ້ມແຂງ,ໃນຄັ້ງວັນທີ 2 ກໍລະກົດ 2023 ແລະ ອື່ນໆ, ພາຍຫຼັງການປະເມີນເຫັນວ່າບັນລຸ 16 ມາດຕະຖານຕາມດຳລັດ ຂອງລັດຖະບານສະບັບເລກທີ 348 ເມືອງ ໄດ້ປະກອບເອກະສານສະເໜີຫາ ທ່ານເຈົ້າແຂວງອອກຂໍ້ຕົກລົງວ່າດ້ວຍການຮັບຮອງຈຸດສຸມພັດທະນາຜາສັງເປັນຕົວເມືອງນ້ອຍ ໃນຊົນນະບົດສະບັບເລກທີ 1796 ລົງວັນທີ 27 ທັນວາ 2023, ທ່ານ ຄຳເພັດ ຈັນຊົມພູ ຮອງເຈົ້າເມືອງໆ ເຟືອງໃຫ້ສຳພາດວ່າ ການປະກາດຈຸດສຸມ ພັດທະນາເປັນຕົວເມືອງນ້ອຍໃນຊົນນະບົດ ຖືເປັນຜົນສຳເລັດສຳຄັນ ແຕ່ໃນຕໍ່ໜ້າເຂດດັ່ງກ່າວຍັງຕ້ອງສືບຕໍ່ພັດທະນາຫຼາຍຢ່າງໃຫ້ດີຂື້ນກວ່າເກົ່າ: ທ່າແຮງທາງດ້ານການພັດທະນາເສດຖະກິດຂອງເມືອງ



ພວກເຮົາສູມໃສ່ວຽກງານກະສິກຳ ການປູກການລ້ຽງເປັນບັນຫາສຳຄັນ ຕິດພັນກັບວຽກງານການທ່ອງທ່ຽວ ມາຮອດປັດຈຸບັນເມືອງເພືອງ ຂອງພວກເຮົາ ສາມາດເຮັດໃຫ້ພໍ່ແມ່ປະຊາຊົນ ແກ້ໄຂຄວາມທຸກຍາກໄດ້ຫຼາຍບັນຫາ, ພ້ອມນີ້ໄດ້ສຸມໃສ່ແຜນການສ້າງບ້ານໃຫຍ່ກໍ່ຄືຈຸດສຸມພັດທະນາຜາສັງໃຫ້ກາຍເປັນສີສັນຂອງຕົວເມືອງໃນຊົນນະບົດໃນນັ້ນ, ຈຸດສຸມພັດທະນາຜາສັງເປັນຈຸດສຸມທີ່ຊຸມຊົນຫຼາຍພວກເຮົາໄດ້ສຸມໃສ່ສ້າງ ຮອດປັດຈຸບັນແມ່ນນີ້ແມ່ນສາມາດຢັ້ງຢືນໄດ້ໃນການປະເມີນຢູ່ໃນ 16 ມາດຕະຖານ ສະນັ້ນມາຮອດມື້ນີ້ພວກເຮົາຈຶ່ງໄດ້ຮັບຮອງເອົາເປັນສີສັນຂອງຕົວເມືອງໃນຊົນນະບົດໄດ້ ພາຍຫຼັງປະກາດແລ້ວພວກເຮົາຕ້ອງໄດ້ສືບຕໍ່ສຸມໃສ່ວຽກງານທີ່ເປັນທ່າແຮງໃຫ້ແກ່ຈຸດສຸມນີ້ກໍ່ຄືວຽກງານກະສິກຳ ການປູກການລ້ຽງໃຫ້ຜະລິດເປັນສິນຄ້າ ຢູ່ພາຍໃນຈຸດສຸມນີ້ໃຫ້ຫຼາກຫຼາຍຂຶ້ນ ສາມາດສ້າງເສດຖະກິດຄອບຄົວຂອງພໍ່ແມ່ປະຊາຊົນໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ.

ໃນພິທີຄັ້ງນີ້ທ່ານ ຄຳພັນ ສິດທິດຳພາ ເຈົ້າແຂວງໆວຽງຈັນ ໄດ້ໃຫ້ກຽດໂອ້ລົມເຊິ່ງທ່ານໄດ້ຮຽກຮ້ອງມາຍັງອົງຄະນະພັກອົງການປົກຄອງທ້ອງຖິ່ນທຸກຂັ້ນຕະຫຼອດເຖິງປະຊາຊົນບັນດາເຜົ່າພາຍໃນຈຸດສຸມພັດທະນາດັ່ງກ່າວສືບຕໍ່ເອົາໃຈໃສ່ຫຼາຍວຽກຈຸດສຸມໃນນີ້ ໜ້າວຽກທີ່ຈະຕ້ອງໄດ້ສືບຕໍ່ອັນໄວນີ້ແມ່ນການປັບປຸງວຽກງານຕະຫຼາດທີ່ຖາວອນ ແລະ ອື່ນໆທີ່ເຫັນວ່າຍັງເຮັດບໍ່ທັນໄດ້ດີ ໃຫ້ຄວາມຮູ້ທາງດ້ານການປູການລ້ຽງຂອງປະຊາຊົນຢາງແທດເຖິງ ການສ້າງຕົວແບບດ້ານການຜະລິດ ຕິດພັນກັບການຜະລິດສິນຄ້າ ແລະ ປຸງແຕ່ງທີ່ໝັ້ນຄົງກໍ່ຄືສິນຄ້າໂອດ່ອບການປັບປຸງພື້ນຖານໂຄງລາງເສັ້ນທາງຊອຍພາຍໃນບ້ານ, ການຕິດຕັ້ງໄຟຟ້າ, ໄຟເຍື່ອງທີ່ເຫັນວ່າມີຄວາມຈຳເປັນ ແລະ ເໝາະສົມຈຶ່ງສົມກັບວ່າເປັນຕົວເມືອງໃນຊົນນະບົດຊຶ່ງຖືເປັນຄວາມຈຳເປັນ ແລະ ພາວະວິໄສ ທີ່ເອົາອັນອື່ນປ່ຽນແທນບໍ່ໄດ້

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປາໄມ້;